ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມພາສີ

ເລກທີ 06491 /ກພສ.
ນະຄອນຫຼວງວຽງຈັນ, ວັນທີ 01 ພະຈິກ 2018

# ແຈ້ງການ

ເຖິງ : - ຫົວໜ້າກອງຄຸ້ມຄອງພາສີ ທົ່ວປະເທດ
- ຫົວໜ້າດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດ
- ຜູ້ປະກອບການສົ່ງອອກສິນຄ້າປະເພດຖ່ານດຳທີ່ໄດ້ຈາກສວນປູກ

ເລື່ອງ : ການຄຸ້ມຄອງການສົ່ງອອກສິນຄ້າປະເພດຖ່ານດຳທີ່ໄດ້ຈາກສວນປູກ

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20/12/2011 ແລະ ສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24/12/2014;
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ເລກທີ 02/ນຍ, ລົງວັນທີ 01/02/2018 ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ.

ເພື່ອເປັນການອຳນວຍຄວາມສະດວກທາງດ້ານການຄ້າ ບົນພື້ນຖານລະບຽບການ ແລະ ເພື່ອເປັນການຫລຸດຜ່ອນຂັ້ນຕອນດ້ານເອກະສານໃນການສົ່ງອອກສິນຄ້າທີ່ລັດອະນຸຍາດໃຫ້ສົ່ງອອກໄດ້ຕາມລະບຽບກົດໝາຍ, ກົມພາສີມອບຄວາມຮັບຜິດຊອບໃຫ້ກອງຄຸ້ມຄອງພາສີ I-VII ຊີ້ນຳດ່ານພາສີສາກົນໃນຂອບເຂດທົ່ວປະເທດໃນການຄຸ້ມຄອງຕິດຕາມ, ກວດກາສິນຄ້າຕົວຈິງໃຫ້ຖືກຕ້ອງຕາມເອກະສານອະນຸຍາດຂອງຂະແໜງການກ່ຽວຂ້ອງຢ່າງເຂັ້ມງວດ.

ກົມພາສີອອກແຈ້ງການ ດັ່ງນີ້ :

1. ມອບໃຫ້ດ່ານພາສີສາກົນໃນຂອບເຂດທົ່ວປະເທດ ປະຕິບັດຕາມແຈ້ງການ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 2035/ຫສນຍ.ກລຂ, ລົງວັນທີ 21/12/2017 ວ່າດ້ວຍລາຍການ (ບັນຊີ)ຜະລິດຕະພັນໄມ້ເພື່ອສົ່ງອອກ ໃນຂໍ້ 2 ລາຍການ (ບັນຊີ) ຜະລິດຕະພັນໄມ້ປູກ (ໄມ້ວິກ, ໄມ້ກະຖິນນາລົງ, ກະຖິນເທພາ ແລະ ໄມ້ຢາງພາລາ) ສາມາດສົ່ງອອກຖ່ານໄມ້ຈາກໄມ້ປູກທຸກຂະໜາດ ແລະ ຂໍ້ຕົກລົງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0002/ອຄ.ກອຫດ ລົງວັນທີ 03/01/2018 ວ່າດ້ວຍການຮັບຮອງເອົາລາຍການ (ບັນຊີ) ຜະລິດຕະພັນໄມ້ເພື່ອສົ່ງອອກ (ສະບັບປັບປຸງ) ເອກະສານຊ້ອນທ້າຍ 02 ຖ້າຫາກວ່າເປັນຜະລິດຕະພັນຖ່ານໄມ້ ທີ່ໄດ້ຈາກໄມ້ປູກ ແລະ ມີການຜະລິດ-ປຸງແຕ່ງ ຕາມຮູບແບບ, ຄຸນລັກສະນະ ທີ່ກຳນົດແມ່ນອະນຸຍາດໃຫ້ສົ່ງອອກໄດ້.

2. ສໍາລັບການເກັບຄ່າຊັກພິເສດແມ່ນໃຫ້ປະຕິບັດຕາມມາດຕາ 59 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20/12/2011 ຢ່າງເຂັ້ມງວດ.
3. ສໍາລັບ ບໍລິສັດ ທີ່ມີຈຸດປະສົງ ໃນການສົ່ງອອກສິນຄ້າປະເພດດັ່ງກ່າວແມ່ນໃຫ້ສະເໜີຫາກອງຄຸ້ມຄອງພາສີ ແລະ ດ່ານພາສີສາກົນບ່ອນສົ່ງອອກເພື່ອຄົ້ນຄ້ວາພິຈາລະນາອະນຸຍາດ, ດໍາເນີນຂັ້ນຕອນການແຈ້ງພາສີເປັນລາຍລະອຽດ ພ້ອມທັງກວດກາສິນຄ້າຕົວຈິງ ແລະ ເອກະສານຈາກຂະແໜງການທີ່ກ່ຽວຂ້ອງໃຫ້ຖືກຕ້ອງຄົບຖ້ວນຢູ່ດ່ານເລີຍ ໂດຍໃຫ້ຖືເອົາແຈ້ງການສະບັບນີ້ ເປັນບ່ອນອີງໃນການຈັດຕັ້ງຈົນກວ່າຈະມີການປ່ຽນແປງ.
4. ມອບໃຫ້ກອງຄຸ້ມຄອງພາສີທົ່ວປະເທດ ເປັນເຈົ້າການຊີ້ນໍາ ດ່ານພາສີຊາຍແດນ ໃນການຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ ພ້ອມທັງສັງລວມ ແລ້ວສະຫຼຸບລາຍງານການສົ່ງອອກສິນຄ້າປະເພດຖ່ານໄມ້ລວມປູກໃຫ້ກົມພາສີຮັບຊາບເປັນແຕ່ລະເດືອນ.
5. ໃນການຈັດຕັ້ງປະຕິບັດ ຖ້າຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານກົມພາສີເພື່ອມີທິດຊີ້ນໍາໃນການແກ້ໄຂຢ່າງທັນເວລາ.

ດັ່ງນັ້ນ, ຈິ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ບຸນປະເສີດ ສີກຸນລະບຸດ

<u>ບ່ອນນໍາສົ່ງ:</u>

| | |
|---|---|
| - ຄະນະກົມພາສີ, ທ່ານລະ | 01 ສະບັບ |
| - ກອງຄຸ້ມຄອງພາສີ I-VII | 01 ສະບັບ |
| - ບັນດາພະແນກຂ້ອມຂ້າງກົມພາສີ, ພະແນກລະ | 01 ສະບັບ |
| - ສໍາເນົາເກັບມ້ຽນ | 01 ສະບັບ |